ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ: 10554 /ຍທຂ.ນວ

ວັນທີ: 17 OCT 2024

ຂາເຂົ້າ | ສຳນັກງານອົງການປົກຄອງ ນວ | ໜ່ວຍງານບໍລິການປະຕູດຽວ

ເລກທີ:......4781.......

ວັນທີ:...22...10...24

## ໜັງສືສະເໜີ

ຮຽນ : ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ສະເໜີຂໍໃຈະໂຄງການກໍ່ສ້າງເສັ້ນທາງເລກທີ 11 (ຕອນໃຕ້) ຕອນທາງແຕ່ບ້ານຜ້າວ ຫາ ບ້ານໝາກນາວເໜືອ ເມືອງປາກງື່ມ ນະຄອນຫຼວງວຽງຈັນ, ລວງຍາວ 32,5 ກິໂລແມັດ.

- ອີງຕາມ ຂໍ້ຕົກລົງຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 444/ຈນວ, ລົງວັນທີ 07 ເມສາ 2023;
- ອີງຕາມ ສັນຍາຮັບເໝົາສະບັບ ເລກທີ 3356/ຍທຂ.ນວ, ລົງວັນທີ 05 ມິຖຸນາ 2020;
- ອີງຕາມ ບົດສະຫຼຸບການກວດກາ 14 ໂຄງການລົງທຶນຂອງລັດ ທີ່ນະຄອນຫຼວງວຽງຈັນ ສະເໜີດັດແກ້ຫຼຸດມູນຄ່າ ແລະ ດັດແກ້ເພີ່ມມູນຄ່າ ຈາກທີ່ສະພາ ໄດ້ຮັບຮອງ ສະບັບວັນທີ 23 ເມສາ 2020.

ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດຢ່າງສູງຮຽນສະເໜີມາຍັງທ່ານ ເພື່ອສະເໜີຂໍໃຈະໂຄງການກໍ່ສ້າງເສັ້ນທາງເລກທີ 11 (ຕອນໃຕ້) ຕອນທາງແຕ່ບ້ານຜ້າວ ຫາ ບ້ານໝາກນາວເໜືອ ເມືອງປາກງື່ມ ນະຄອນຫຼວງວຽງຈັນ, ລວງຍາວ 32,5 ກິໂລແມັດ, ທີ່ໄດ້ຮັບອະນຸມັດດ້ວຍຮູບແບບລົງທຶນກ່ອນ ແຕ່ປີ 2012 ທີ່ມີຄວາມລ້າຊ້າ, ບໍ່ສຳເລັດຕາມແຜນການ ແລະ ບໍ່ມີການສືບຕໍ່ລົງມືຈັດຕັ້ງປະຕິບັດ ມີລາຍລະອຽດດັ່ງລຸ່ມນີ້:

ໂຄງການກໍ່ສ້າງທາງເລກທີ 11 ຕອນໃຕ້ ຊຽງຄວນ-ບ້ານຜ້າວ (ປູຢາງ2ຊັ້ນ): ໄດ້ເຂົ້າແຜນສົກປີ 2011-2012 ມູນຄ່າ 46,750 ລ້ານກີບ ເພື່ອກໍ່ສ້າງເປັນທາງປູຢາງ2ຊັ້ນ; ແຕ່ອີງໃສ່ທິດຊີ້ນຳຂອງນະຄອນຫຼວງວຽງຈັນ ໃຫ້ເສັ້ນທາງດັ່ງກ່າວເປັນທາງຫຼວງແຫ່ງຊາດທີ 11 ຕອນໃຕ້ ເພື່ອຂົນສົ່ງສິນຄ້າເວັ້ນຕົວເມືອງ ແລະ ທັງເປັນຄູປ້ອງກັນນ້ຳຖ້ວມ ຈຶ່ງໄດ້ປ່ຽນເປັນເສັ້ນທາງເບຕົງເສີມເຫຼັກ ເຮັດໃຫ້ມູນຄ່າເພີ່ມຂຶ້ນເປັນ 429,543.24 ລ້ານກີບ(ເພີ່ມຂຶ້ນຈາກແຜນ 382,797.24 ລ້ານກີບ) ແລ້ວນະຄອນຫຼວງວຽງຈັນ ໄດ້ມີຂໍ້ຕົກລົງເລກທີ 1156/ຈນວ, ລົງວັນທີ 17/09/2012 ໃຫ້ບໍລິສັດຟອງສະມຸດ ກໍ່ສ້າງຂົວທາງ ຈຳກັດ ລົງທຶນກໍ່ສ້າງ ແລະ ໄດ້ເຊັນສັນຍາ ເລກທີ 3620/ຍທຂ.ນວ, ລົງວັນທີ 17/09/2012 ເພື່ອຮັບເໝົາກໍ່ສ້າງໂຄງການດັ່ງກ່າວ ໃນຄວາມຍາວ 32,5 ກມ, ຄວາມກວ້າງໜ້າປູເບຕົງ 9 ແມັດ, ບ່າທາງຂ້າງລະ 1 ແມັດ, ມູນຄ່າ 53,693,405.24 USD, ໄລຍະກໍ່ສ້າງ 30 ເດືອນ ແລະ ໄດ້ຮັບອະນຸມັດເຂົ້າແຜນເພີ່ມອີກ ເປັນໂຄງການລົງທຶນກ່ອນສົກປີ 2014-2015 ມູນຄ່າ 382,797.24 ລ້ານກີບ ລວມມູນຄ່າໄດ້ຮັບອະນຸມັດເຂົ້າແຜນ 429,547.24 ລ້ານກີບ ເທົ່າກັບມູນຄ່າສັນຍາ; ດ້ານການກໍ່ສ້າງໂຄງການອີງຕາມບົດບັນທຶກກວດກາຄັ້ງທີ 2 ເດືອນ 4/2017 ມູນຄ່າປະຕິບັດໄດ້ 19,917,810 USD, ເທົ່າກັບ 33% ແລະ ໄດ້ສືບຕໍ່ປະຕິບັດວຽກ ຮອດເດືອນ 11/2017 ປະເມີນມູນຄ່າວຽກໄດ້ 23,920,014 USD, ເທົ່າກັບ 44% ກໍ່ໄດ້ຢຸດການກໍ່ສ້າງ (ຍ້ອນມີຂໍ້ຂັດແຍ່ງພາຍໃນຂອງຜູ້ຮັບເໝົາ) ການຈັດຕັ້ງປະຕິບັດຂອງບໍລິສັດຜູ້ຮັບເໝົາບໍ່ສຳເລັດຕາມແຜນການ ຍ້ອນຂາດທຶນໝູນວຽນ ຕໍ່ມາ ຈຶ່ງໄດ້ເຊັນສັນຍາຮ່ວມທຸລະກິດ MOA ກັບບໍລິສັດ ປັກກິ່ງຈິ່ງເຫິງຄຸນຫຼຸນ

ບໍລິຫານການລົງທຶນຈຳກັດ ຈາກ ສປ ຈີນ ສະບັບເລກທີ 011/ຟສໜ, ລົງວັນທີ 14/12/2016, ຕໍ່ມາໄດ້ເກີດມີການຮ້ອງຟ້ອງ ຄູ່ຮ່ວມມືດ້ວຍກັນລະຫວ່າງ ບໍລິສັດຟອງສະໝຸດ ກໍ່ສ້າງຂົວທາງຈຳກັດ ກັບ ບໍລິສັດ ປັກກິ່ງຈິ່ງເຫິງຄຸນໝູນ ບໍລິຫານການລົງທຶນຈຳກັດ ຍ້ອນບໍ່ປະຕິບັດພັນທະກ່ຽວກັບຜົນປະໂຫຍດ ທີ່ໄດ້ຕົກລົງກັນໄວ້ລະຫວ່າງສອງຝ່າຍ, ມາຮອດວັນທີ 8/5/2019 ສານໄດ້ອອກຖະແຫຼງຄຳຕັດສິນຄື: ໃຫ້ລົບລ້າງ MOA ສະບັບເລກທີ 011/ຟສໜ, ລົງວັນທີ 14/12/2016 ທີ່ບໍລິສັດຟອງສະໝຸດ ກໍ່ສ້າງຂົວທາງຈຳກັດ ກັບ ບໍລິສັດ ປັກກິ່ງຈິ່ງເຫິງຄຸນໝູນ ບໍລິຫານການລົງທຶນຈຳກັດ, ຫົວໜ້າຫ້ອງການຈັດຕັ້ງປະຕິບັດ ຄຳຕັດສິນຂອງສານໄດ້ອອກຄຳແຈ້ງການ: ໃຫ້ບໍລິສັດຟອງສະໝຸດ ກໍ່ສ້າງຂົວທາງ ຈຳກັດ ສືບຕໍ່ປະຕິບັດໂຄງການ ຕາມສັນຍາຮັບເໝົາສະບັບເລກທີ 3620/ຍທຂ.ນວ, ລົງວັນທີ 17 ກັນຍາ 2012 ລະຫວ່າງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ບໍລິສັດຟອງສະໝຸດ ກໍ່ສ້າງຂົວທາງຈຳກັດ, ພາຍຫຼັງທີ່ສານໄດ້ມີການຕັດສິນແລ້ວ ບໍລິສັດຟອງສະໝຸດ ກໍ່ສ້າງຂົວທາງຈຳກັດ ໄດ້ຍື່ນໃບສະເໜີມາຍັງ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເພື່ອຂໍສືບຕໍ່ການກໍ່ສ້າງ ແລະ ໄດ້ມອບສິດໃຫ້ກຸ່ມບໍລິສັດ ຈຳປາຄຳ ຈຳກັດຜູ້ດຽວ ອີງຕາມໃບມອບສິດສະບັບເລກທີ 1207/ຟສໜ, ລົງວັນທີ 25/02/2020, ຕໍ່ມາໄດ້ມີຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 338/ຈນວ, ລົງວັນທີ 5/6/2020 ວ່າດ້ວຍການປ່ຽນໂອນສັນຍາໂຄງການ ຈາກບໍລິສັດ ຟອງສະໝຸດ ກໍ່ສ້າງຂົວທາງຈຳກັດ ມາເປັນ ກຸ່ມບໍລິສັດຈຳປາຄຳ ຈຳກັດຜູ້ດຽວ ສືບຕໍ່ກໍ່ສ້າງເສັ້ນທາງດັ່ງກ່າວ ແລະ ອານຸມັດໃຫ້ເຊັນສັນຍາຄືນໃໝ່ກັບເຈົ້າຂອງໂຄງການກໍ່ຄືພະແນກ ຍທຂ ນະຄອນຫຼວງວຽງຈັນ ຕາມສັນຍາສະບັບເລກທີ 3356/ຍທຂ.ນວ ລົງວັນທີ 11/06/2020, ຫຼັງຈາກນັ້ນຜູ້ຮັບເໝົາກໍໄດ້ສືບຕໍ່ກໍ່ສ້າງເບດິງໜ້າທາງ ຈຳນວນໜຶ່ງ ແຕ່ກໍ່ບໍ່ສຳເລັດຕາມແຜນການ ລວມຄວາມຄືບໜ້າທັງໝົດໄດ້ປະມານ 46% (ເພີ່ມຂຶ້ນ 2%), ໄລຍະຜ່ານມາກໍ່ໄດ້ປຶກສາຫາລືກັນຫຼາຍຄັ້ງ ແຕ່ກໍ່ບໍ່ສາມາດສືບຕໍ່ຈັດຕັ້ງປະຕິບັດໄດ້ ຍ້ອນຜູ້ຮັບເໝົາຂາດສະພາບຄ່ອງທາງດ້ານທຶນຮອນ ບວກກັບການເພີ່ມຂຶ້ນຂອງລາຄາວັດສະດຸ, ນ້ຳມັນເຊື້ອໄຟ ແລະ ອັດຕາແລກປ່ຽນ ແລະ ສັນຍາກໍ່ໄດ້ສິ້ນສຸດລົງແຕ່ເດືອນ 06/2022 ທີ່ຜ່ານມາ, ຕົກມາປີ 2024 ກໍໄດ້ແຈ້ງເຊີນບໍລິສັດຜູ້ຮັບເໝົາເພື່ອມາປຶກສາຫາລື 02 ຄັ້ງ ແຕ່ກໍບໍ່ໄດ້ຮັບການຕອບຮັບແຕ່ຢ່າງໃດ (ບໍ່ເຂົ້າມາພົບພັນຕາມແຈ້ງເຊີນ).

ສະນັ້ນ, ເພື່ອເຮັດໃຫ້ໂຄງການກໍ່ສ້າງເສັ້ນທາງດັ່ງກ່າວໄດ້ສືບຕໍ່ຈັດຕັ້ງປະຕິບັດໃຫ້ສຳເລັດ, ເຮັດໃຫ້ການສັນຈອນໄປມາສະດວກສະບາຍ, ຮອງຮັບການຂະຫຍາຍຕົວເມືອງໃນອະນາຄົດ, ຫຼຸດຫາງສຽງຈົ່ມວ່າຈາກສັງຄົມ, ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫຼວງວຽງຈັນ ແລະ ຖືກຕ້ອງສອດຄ່ອງກັບລະບຽບການທີ່ໄດ້ກຳນົດໄວ້.

ຕາມທັດສະນະຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເຫັນວ່າຄວນຍົກເລີກສັນຍາກັບຜູ້ຮັບເໝົາເດີມ ພ້ອມແຕ່ງຕັ້ງຄະນະກຳມະການພາກສ່ວນກ່ຽວຂ້ອງ ເພື່ອຢັ້ງຢືນຄວາມຖືກຕ້ອງ, ຫຼັງຈາກນັ້ນຈະໄດ້ສັງລວມຂໍ້ມູນ, ສຳຫຼວດ-ອອກແບບ ຂຽນບົດສະເໜີໂຄງການຫາພາກສ່ວນທີ່ກ່ຽວຂ້ອງ ເພື່ອປະເມີນຄືນ ແລະ ກ້າວໄປເຖິງການຊອກຫາແຫຼ່ງງົບປະມານເພື່ອມາສືບຕໍ່ຈັດຕັ້ງປະຕິບັດ ບັນດາໂຄງການດັ່ງກ່າວໃຫ້ສຳເລັດ ຕາມຂັ້ນຕອນ ແລະ ລະບຽບການທີ່ໄດ້ວາງໄວ້.

ດັ່ງນັ້ນ, ຈຶ່ງຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ທະວີໄຊ ໄຊປະເສີດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ: 8086 /ຍທຂ.ນວ

ລົງວັນທີ: 09 AUG 2024

**ໜັງສືເຊີນ (ຄັ້ງທີ 02)**

**ເຖິງ: ທ່ານ ປະທານກຸ່ມບໍລິສັດ ຈໍາປາຄໍາ ຈໍາກັດຜູ້ດຽວ ທີ່ນັບຖື.**

**ເລື່ອງ: ການສືບຕໍ່ລົງທຶນກໍ່ສ້າງເສັ້ນທາງເລກທີ 11(ຕອນໃຕ້) ແຕ່ບ້ານຜ້າວ ຫາ ບ້ານໜາກນາວເໜືອ ເມືອງປາກງື່ມ, ນະຄອນຫຼວງວຽງຈັນ.**

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 444/ຈນວ, ລົງວັນທີ 07 ເມສາ 2023. ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 338/ຈນວ, ລົງວັນທີ 5 ມິຖຸນາ 2020 ວ່າດ້ວຍການຮັບຮູ້ການປ່ຽນໂອນສັນຍາ.
- ອີງຕາມ ສັນຍາດັດແກ້ເພີ່ມເຕີມ ສະບັບເລກທີ 3356/ຍທຂ.ນວ, ລົງວັນທີ 11/06/2020 ລະຫວ່າງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ກັບ ກຸ່ມບໍລິສັດ ຈໍາປາຄໍາ ຈໍາກັດຜູ້ດຽວ.

ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໃນນາມເຈົ້າຂອງໂຄງການ ຂໍຖືເປັນກຽດແຈ້ງມາຍັງທ່ານ ໃນນາມຜູ້ຮັບເໝົາ ເຂົ້າມາລາຍງານສະພາບຄວາມພ້ອມໃນການສືບຕໍ່ລົງທຶນເຂົ້າໃນໂຄງການກໍ່ສ້າງເສັ້ນທາງ ເລກທີ 11 ຕອນໃຕ້ ແຕ່ບ້ານຜ້າວ ຫາ ບ້ານໜາກນາວເໜືອ, ເມືອງປາກງື່ມ, ນະຄອນຫຼວງວຽງຈັນ ລວງຍາວ 32,5 ກມ, ມີຂໍ້ສະດວກ-ຂໍ້ຫຍຸ້ງຍາກ ແລະ ມີຄວາມຄືບໜ້າຄືແນວໃດ, ສະເໜີທ່ານເຂົ້າມາປຶກສາຫາລື ແລະ ປະກອບເອກະສານຢັ້ງຢືນຄວາມພ້ອມຢ່າງເປັນທາງການ ນໍາສົ່ງໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ກ່ອນວັນທີ **23 ສິງຫາ 2024,** ເພື່ອກວດກາ, ສັງລວມ ແລ້ວຈະໄດ້ລາຍງານການນໍານະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນໍາໃນການອະນຸມັດສືບຕໍ່ລົງທຶນ ຫຼື ໂຈະໂຄງການດັ່ງກ່າວ ຕາມຂັ້ນຕອນ ແລະ ລະບຽບການທີ່ໄດ້ກໍານົດໄວ້.

**ດັ່ງນັ້ນ**, ຈຶ່ງແຈ້ງມາຍັງທ່ານ ເພື່ອພິຈາລະນາ ແລະ ປະຕິບັດຕາມທາງຄວນດ້ວຍ.

**ຫົວໜ້າພະແນກ**

ພະແນກ ໂຍທາທິການ ແລະ ຂົນສົ່ງ

ບຸນຍະວັດ ນິຣະໄຊຍ໌

ເບີໂທຕິດຕໍ່
**020 5555 9638**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກໂຍທາທິການ ແລະ ຂົນສົ່ງ

11280

ເລກທີ.................../ຍທຂ.ນວ

ລົງວັນທີ.......... 14 DEC 2023

ເຖິງ: ທ່ານ ປະທານກຸ່ມບໍລິສັດ ຈຳປາຄຳ ຈຳກັດຜູ້ດຽວ ທີ່ນັບຖື.

ເລື່ອງ: ການສືບຕໍ່ລົງທຶນກໍ່ສ້າງເສັ້ນທາງເລກທີ **11**(ຕອນໃຕ້) ແຕ່ບ້ານຜ້າວ ຫາ ບ້ານໝາກນາວເໜືອ ບ້ານໝາກນາວເໜືອ, ເມືອງປາກງື່ມ, ນະຄອນຫຼວງວຽງຈັນ.

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 444/ຈນວ, ລົງວັນທີ 07 ເມສາ 2023. ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ.
- ອີງຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 338/ຈນວ, ລົງວັນທີ 5 ມິຖຸນາ 2020 ວ່າດ້ວຍການຮັບຮູ້ການປັບປຸງໂອນສັນຍາ.
- ອີງຕາມສັນຍາດັດແກ້ເພີ່ມເຕີມ ສະບັບເລກທີ 3356/ຍທຂ.ນວ ລົງວັນທີ 11/06/2020 ລະຫວ່າງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ກັບ ກຸ່ມບໍລິສັດ ຈຳປາຄຳ ຈຳກັດຜູ້ດຽວ.

ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໃນນາມເຈົ້າຂອງໂຄງການ ຂໍຖືເປັນກຽດແຈ້ງມາຍັງທ່ານໃນນາມຜູ້ຮັບເໝົາ ເຂົ້າມາລາຍງານສະພາບຄວາມພ້ອມໃນການສືບຕໍ່ລົງທຶນເຂົ້າໃນໂຄງການກໍ່ສ້າງເສັ້ນທາງ ເລກທີ 11 ຕອນໃຕ້ ແຕ່ບ້ານບ້ານຜ້າວ ຫາ ບ້ານໝາກນາວເໜືອ, ເມືອງປາກງື່ມ, ນະຄອນຫຼວງວຽງຈັນ ລວງຍາວ 32,5 ກມ, ມີຂໍ້ສະດວກ-ຂໍ້ຫຍຸ້ງຍາກ ແລະ ມີຄວາມຄືບໜ້າຄືແນວໃດ, ສະເໜີທ່ານເຂົ້າມາປຶກສາຫາລື ແລະ ປະກອບເອກະສານຢັ້ງຢືນຄວາມພ້ອມຢ່າງເປັນທາງການ ນຳສົ່ງໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ກ່ອນວັນທີ **12 ມັງກອນ 2024**, ເພື່ອກວດກາ, ສັງລວມ ແລ້ວຈະໄດ້ລາຍງານການນຳນະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນຳໃນການອະນຸມັດສືບຕໍ່ລົງທຶນ ຫຼື ໂຈະໂຄງການດັ່ງກ່າວ ຕາມຂັ້ນຕອນ ແລະ ລະບຽບການທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອພິຈາລະນາ ແລະ ປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ພຸດທະເສນ ສິນທະວົງ